# ຄະນະພົວພັນຕ່າງປະເທດສູນກາງພັກ

## Committee for External Relations of the Party Central Committee


**I. ການເຄື່ອນໄຫວຂອງບັນດາພັກການເມືອງ, ສະພາບການພົ້ນເດັ່ນໃນພາກພື້ນ ແລະ ສາກົນ.. ໜ້າ 01-04**

**II. ການເຄື່ອນໄຫວວຽກງານຂອງຄະນະນຳ ຄຕພ..................................................... ໜ້າ 05-09**


ໃບຂ່າວຂອງຄະນະພົວພັນຕ່າງປະເທດສູນກາງພັກ
ປະຈຳເດືອນ ທັນວາ **2023**


**ສຳນັກງານ ຕັ້ງຢູ່ ບ້ານ ສີວິໄລ, ເມືອງໄຊທານີ, ນະຄອນຫຼວງວຽງຈັນ**

**Tel : 021 414046, Email: Ri.dept.la@Gmail.com, Website: www.cerccp.org.la**

# I. ການເຄື່ອນໄຫວຂອງບັນດາພັກການເມືອງ, ສະພາບການພົ້ນເດັ່ນໃນພາກພື້ນ ແລະ ສາກົນ

## 1. ການເຄື່ອນໄຫວຂອງບັນດາພັກການເມືອງຕ່າງປະເທດ

### 1) ພັກກອມມູນິດຫວຽດນາມ

ວັນທີ 01/12/2023, ສະຫາຍ ຫງວຽນ ຟູຈ້ອງ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ໄດ້ຕ້ອນຮັບ ສະຫາຍ ຫວາງ ອີ້, ກຳມະການກົມການເມືອງ, ຫົວໜ້າຫ້ອງການຄະນະກຳມະການວຽກງານຕ່າງປະເທດສູນກາງພັກກອມມູນິດຈີນ, ລັດຖະມົນຕີກະຊວງການຕ່າງປະເທດຈີນ ຢ້ຽມຢາມ ສສ ຫວຽດນາມ ແລະ ເຂົ້າຮ່ວມກອງປະຊຸມຄະນະຊີ້ນຳການຮ່ວມມືຈີນ-ຫວຽດນາມ ຄັ້ງທີ 15. ສະຫາຍ ຫງວຽນ ຟູຈ້ອງ ໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບລະຫວ່າງສອງພັກ-ສອງລັດ ຫວຽດນາມ-ຈີນ; ການຢ້ຽມຢາມ ສສ ຫວຽດນາມຄັ້ງນີ້ ເປັນການປະກອບສ່ວນສຳຄັນໃນການເສີມຂະຫຍາຍການຮ່ວມມືໃນບັນດາຂົງເຂດຕ່າງໆໃຫ້ນັບມື້ໄດ້ຮັບປະສິດທິຜົນ ແລະ ເລິກເຊິ່ງຍິ່ງໆຂຶ້ນ, ລົງເລິກຂົງເຂດວຽກງານຕ່າງປະເທດລະຫວ່າງສອງພັກ-ສອງລັດ, ເພີ່ມທະວີການພົບປະແລກປ່ຽນຂອງການນຳຂັ້ນສູງ ແລະ ສ້າງສະພາບແວດລ້ອມອັນເອື້ອອຳນວຍໃຫ້ແກ່ການພົວພັນລະຫວ່າງສອງພັກ, ສອງລັດ ໃຫ້ໄດ້ຮັບການພັດທະນາຢ່າງບໍ່ຢຸດຢັ້ງ. ສະຫາຍ ຫວາງ ອີ້ ໄດ້ຕີລາຄາສູງຕໍ່ສາຍພົວພັນມິດຕະພາບລະຫວ່າງສອງພັກ-ສອງລັດ ແລະ ບັນດາຜົນສຳເລັດອັນໃຫຍ່ຫຼວງຂອງສອງຊາດທີ່ຍາດມາໄດ້ຕະຫຼອດ 40 ປີ ແຫ່ງການປ່ຽນແປງໃໝ່ນັບແຕ່ກອງປະຊຸມໃຫຍ່ ຄັ້ງທີ XIII ຂອງພັກກອມມູນິດຫວຽດນາມ ຈົນເຖິງປັດຈຸບັນ.

ວັນທີ 19/12/2023, ສະຫາຍ ຫວຽນ ຟູຈອງ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ໄດ້ເຂົ້າຮ່ວມກອງປະຊຸມການທູດ ຄັ້ງທີ 32 ພາຍໃຕ້ຫົວຂໍ້ "ເສີມຂະຫຍາຍບົດບາດນຳໜ້າ, ສ້າງພື້ນຖານການທູດຢ່າງຮອບດ້ານ, ທັນສະໄໝ, ໝັ້ນຄົງ, ເຂັ້ມແຂງ, ປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XIII ຂອງພັກ ຢ່າງມີໄຊ". ກອງປະຊຸມໄດ້ກວດກາຄືນການປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XIII ໄລຍະ 03 ປີ ຜ່ານມາ ຕໍ່ກັບວຽກງານການຕ່າງປະເທດ ແລະ ການທູດ, ສະເໜີບັນດາທິດທາງ ແລະ ມາດຕະການເພື່ອແນໃສ່ການຜັນຂະຫຍາຍບັນດາໜ້າທີ່ການຕ່າງປະເທດ ແລະ ການທູດ ໃນຊຸມປີຕໍ່ໜ້າເພື່ອປະກອບສ່ວນເຂົ້າໃນການກະກຽມສະຫຼຸບ 40 ປີ ແຫ່ງການປະຕິບັດແນວທາງການປ່ຽນແປງໃໝ່. ພ້ອມດຽວກັນ, ສະຫາຍ ຫວຽນ ຟູຈອງ ກ່າວວ່າ ການພົວພັນວຽກງານການຕ່າງປະເທດ ແລະ ການທູດ ຍັງຈະສືບຕໍ່ພົບກັບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍ, ແຕ່ເຊື່ອໝັ້ນວ່າບົນພື້ນຖານຄວາມສະຫຼາດສ່ອງໃສ ກ້າຫານ ແລະ ຄຸນສົມບັດທາງການທູດຂອງຍຸກ ປະທານໂຮ່ຈິມິນ ທີ່ປະຕິບັດແນວທາງການຕ່າງປະເທດຢ່າງເຂັ້ມແຂງຮອບດ້ານ ທີ່ປະກອບສ່ວນໃນພາລະກິດການສ້າງສາປົກປັກຮັກສາປະເທດຊາດ ແລະ ປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XIII ຂອງພັກ ຈະເຮັດໃຫ້ວຽກງານຕ່າງປະເທດປະສົບຜົນສຳເລັດຢ່າງມີໄຊ.

### 2) ພັກກອມມູນິດຈີນ

ວັນທີ 12-13/12/2023, ສະຫາຍ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກກອມມູນິດຈີນ, ປະທານປະເທດ ແຫ່ງ ສປ ຈີນ ຢ້ຽມຢາມລັດຖະກິດ ສສ ຫວຽດນາມ, ໄດ້ພົບປະກັບ ສະຫາຍ ຫງວຽນ ຟູຈອງ, ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ; ສະຫາຍ ຫວໍ ວັນເຖືອງ, ປະທານປະເທດ ແຫ່ງ ສສ ຫວຽດນາມ. ສອງຝ່າຍເຫັນດີເປັນເອກະພາບກັນໃນການສ້າງຄູ່ຮ່ວມຊາຕາກຳຈີນ-ຫວຽດນາມ, ເພີ່ມທະວີການພົວພັນຄູ່ຮ່ວມມືຍຸດທະສາດຮອບດ້ານຈີນ-ຫວຽດນາມ, ເພີ່ມທະວີຄວາມໄວ້ເນື້ອເຊື່ອໃຈທາງດ້ານການເມືອງ ແລະ ປະສານສົມທົບກັນຢ່າງໃກ້ຊິດໃນການແກ້ໄຂບັນຫາທະເລຈີນໃຕ້. ພ້ອມນີ້, ສອງຝ່າຍໄດ້ລົງນາມຮ່ວມກັນໃນຫຼາຍຂົງເຂດເປັນຕົ້ນ ການຮ່ວມກັນສ້າງໜຶ່ງແລວໜຶ່ງເສັ້ນທາງ, ການເມືອງ, ຄວາມໝັ້ນຄົງ, ເສດຖະກິດ-ການຄ້າ, ຄົມມະນາຄົມຂົນສົ່ງ, ການຮ່ວມມືທາງທະເລ, ການໄປມາຫາສູ່ຂອງປະຊາຊົນສອງຊາດ ແລະ ອື່ນໆ.

ວັນທີ 18/12/2023, ທ່ານ ສີ ຈິ້ນຜິງ, ເລຂາທິການໃຫຍ່ຄະນະກຳມະການສູນກາງພັກກອມມູນິດຈີນ, ປະທານປະເທດຈີນ ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ ຫຼີ ເຈ່ຍຊາວ, ຜູ້ວ່າການເຂດບໍລິຫານພິເສດຮົງກົງ ແລະ ທ່ານ ເຮົ້ຢີ່ເຊີງ, ຜູ້ວ່າການເຂດບໍລິຫານພິເສດມາເກົາ ເຂົ້າລາຍງານວຽກງານ ແລະ ສະພາບພາຍໃນເຂດພິເສດຮົງກົງ ແລະ ມາເກົາໃນປີ 2023. ທ່ານ ສີ ຈິ້ນຜິງ ກ່າວວ່າ ລັດຖະບານສູນກາງຈີນ ຈະສືບຕໍ່ປະຕິບັດນະໂຍບາຍ ຈີນດຽວ ສອງລະບອບຢ່າງຮອບດ້ານ, ຖືກຕ້ອງ, ເດັດດ່ຽວ ແລະ ໝັ້ນທ່ຽງບໍ່ປ່ຽນແປງ; ຊຸກຍູ້ໃຫ້ຮົງກົງ ແລະ ມາເກົາບັນລຸການພັດທະນາຂຶ້ນສູ່ລະດັບໃໝ່.

3) **ພັກແຮງງານເກົາຫຼີ**

ວັນທີ 26/12/2023, ສູນກາງພັກແຮງງານເກົາຫຼີ ໄດ້ດໍາເນີນກອງປະຊຸມຄົບຄະນະບໍລິຫານງານສູນກາງພັກແຮງງານເກົາຫຼີ ຄັ້ງທີ 9 ສະໄໝທີ VIII ທີ່ ສໍານັກງານຫ້ອງວ່າການສູນກາງພັກແຮງງານເກົາຫຼີ ໂດຍເປັນກຽດເຂົ້າຮ່ວມ ຂອງ ສະຫາຍ ກິມເຈີງອຸນ, ເລຂາທິການໃຫຍ່ພັກແຮງງານເກົາຫຼີ. ໃນກອງປະຊຸມດັ່ງກ່າວ ໄດ້ສະຫຼຸບຕີລາຄາຄືນກ່ຽວກັບການຈັດຕັ້ງປະຕິບັດວຽກງານ ແລະ ນະໂຍບາຍສໍາຄັນຂອງພັກໃນໄລຍະ 1 ປີ ຜ່ານມາ ເພື່ອຮັກສາຜົນປະໂຫຍດ ແລະ ນໍາໄປສູ່ການພັດທະນາໃໝ່ຕາມລັດທິສັງຄົມນິຍົມແບບ ສປປ ເກົາຫຼີ ທີ່ໄດ້ກໍານົດໄວ້ໃນກອງປະຊຸມຄົບຄະນະບໍລິຫານງານສູນກາງພັກແຮງງານເກົາຫຼີ ຄັ້ງທີ 7 ແລະ 8 ສະໄໝທີ VIII ແລະ ກໍານົດທິດທາງແຜນການ ໃນປີ 2024. ໃນກອງປະຊຸມ ສະຫາຍ ກິມເຈີງອຸນ ຍັງໄດ້ເນັ້ນໜັກກ່ຽວກັບວຽກງານໃນຂົງເຂດກະສິກໍາ, ໄດ້ຕີລາຄາສູງຕໍ່ຜົນສໍາເລັດ ໂດຍສະເພາະໂຄງການພັດທະນາກະສິກໍາໃນເຂດຊົນນະບົດ, ເຊິ່ງວຽກງານດັ່ງກ່າວ ສາມາດຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນເກົາຫຼີ ໄດ້ດີຂຶ້ນເທື່ອລະກ້າວ ແລະ ໄດ້ຊົມເຊີຍຜົນສໍາເລັດດ້ານວຽກງານປ້ອງກັນປະເທດ ກໍ່ຄື ຜົນສໍາເລັດໃນການພັດທະນາອາວຸດຍຸດໂທປະກອນໃຫ້ທັນສະໄໝ ແລະ ວຽກງານອື່ນໆ.

4) **ຍີ່ປຸ່ນ**

ວັນທີ 23-24/12/2023, ຄະນະຜູ້ແທນຂັ້ນສູງຂອງພັກກອມມູນິດຍີ່ປຸ່ນ ນໍາໂດຍ ສະຫາຍ ສະຫາຍ ຊີອິ ຄາຊູໂອະ ປະທານ ຄະນະບໍລິຫານງານ ພັກກອມມູນິດຍີປຸ່ນ ໄດ້ຢ້ຽມຢາມ ສປປ ລາວ ແລະ ເຂົ້າຢ້ຽມຂໍ່ານັບ ສະຫາຍ ທອງລຸນ ສີສຸລິດ, ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ ປປ ລາວ, ປະທານປະເທດ ແຫ່ງ ສປປ ລາວ ແລະ ພົບປະກັບສອງຝ່າຍ ກັບ ສະຫາຍ ບຸນທອງ ຈິດມະນີ, ກໍາມະການກົມການເມືອງ, ຜູ້ປະຈໍາການຄະນະເລຂາທິການສູນກາງພັກ, ຮອງປະທານປະເທດ ແຫ່ງ ສປປ ລາວ ແລະ ການນໍາອື່ນໆຂອງລາວ, ສອງຝ່າຍໄດ້ຕີລາຄາສູງຕໍ່ອຸດົມການຂອງທັງສອງພັກ ໂດຍຍຶດໝັ້ນແນວທາງປົກປັກຮັກສາສັນຕິພາບ ເພື່ອສ້າງສະພາບແວດລ້ອມທີ່ອໍານວຍໃຫ້ແກ່ການຮ່ວມມື ເພື່ອການພັດທະນາໃນພາກພື້ນ ແລະ ໃນໂລກ; ຍິນດີສືບຕໍ່ເພີ່ມທະວີການພົວພັນຮ່ວມມື ເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບ ອັນເປັນມູນເຊື້ອ ລະຫວ່າງ ສອງພັກ ໂດຍສະເໜີໃຫ້ມີການຄົ້ນຄວ້າສ້າງຕັ້ງກົນໄກການແລກປ່ຽນ ແລະ ການຮ່ວມມື ລະຫວ່າງ ສອງພັກ ເພື່ອປະກອບສ່ວນເຂົ້າໃນການຊຸກຍູ້ການພົວພັນຮ່ວມມື ລະຫວ່າງ ສອງປະເທດ ຍີ່ປຸ່ນ-ລາວ, ລາວ-ຍີ່ປຸ່ນ ໃຫ້ໄດ້ຮັບການພັດທະນາຍິ່ງໆຂຶ້ນ ເພື່ອນໍາເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ ລາວ-ຍີ່ປຸ່ນ ໃຫ້ນັບມື້ຫຼາຍຂຶ້ນ. ນອກນັ້ນ, ສອງຝ່າຍ ຍັງໄດ້ແລກປ່ຽນສະພາບການພົ້ນເດັ່ນໃນພາກພື້ນ ແລະ ສາກົນ ທີ່ສອງຝ່າຍມີຄວາມສົນໃຈຮ່ວມກັນ.

5) **ເອຢິບ**

ວັນທີ 10-12/12/2023, ສາທາລະນະລັດ ເອຢິບໄດ້ຈັດເລືອກຕັ້ງ ປະທານາທິບໍດີຂອງຕົນ ຊຶ່ງມີປະຊາຊົນເອຢິບອອກມາໃຊ້ສິດເລືອກຕັ້ງ 44,8 ລ້ານຄົນ (66,8%); ຜົນການເລືອກຕັ້ງ ທ່ານ Abdel Fattah al Sisi ຜູ້ສະໝັກເອກະລາດ ໄດ້ຄະແນນສຽງສະໜັບສະໜູນ 89,6%; ທ່ານ Hazem Omar ຈາກພັກສາທາລະນະລັດປະຊາຊົນ ໄດ້ 4,5%. ຕໍ່ໄຊຊະນະດັ່ງກ່າວ ທ່ານ Abdel Fattah al Sisi ໄດ້ຮັບເລືອກຕັ້ງເປັນປະທານນາທິບໍດີອີກວາລະໜຶ່ງ ແລະ ໄດ້ກ່າວວ່າ ພາຍໃຕ້ສະພາບຄວາມຫຍຸ້ງຍາກໃນຫຼາຍໆດ້ານ ແລະ ບັນດາສິ່ງທ້າທາຍຕ່າງໆນັ້ນ ປະຊາຊົນຍັງເຊື່ອໝັ້ນຕໍ່ລັດຖະບານຊຸດປັດຈຸບັນ, ຂ້າພະເຈົ້າຕາງໜ້າລັດຖະບານ ສັນຍາວ່າຈະສືບຕໍ່ນໍາພາປະເທດຊາດບົນພື້ນຖານຮັກສາຜົນປະໂຫຍດຂອງປະຊາຊົນ.

2. **ສະພາບພາກພື້ນ ແລະ ສາກົນ**

1. **ສະພາບການໃນຂົງເຂດອາຊີ-ປາຊີຟິກ ແລະ ອາຟຣິກາ**

1) **ສະພາບມຽນມາ**

ສະພາບພາຍໃນມຽນມາ ຍັງສືບຕໍ່ວຸ້ນວາຍພາຍຫຼັງກຳລັງຊົນເຜົ່າສ່ວນນ້ອຍ ສາມາດຍຶດຖານທີ່ໝັ້ນຂອງກອງທັບມຽນມາ ໄດ້ຫຼາຍກວ່າ 422 ແຫ່ງ ໃນ 07 ເມືອງທົ່ວປະເທດ ນັບແຕ່ວັນທີ 27/10/2023 ເປັນຕົ້ນມາ. ປັດຈຸບັນ, ສະພາບການມີທ່າທີປານີປານອມຫຼາຍຂຶ້ນ, ພາຍຫຼັງການເຂົ້າຮ່ວມເຈລະຈາຂອງຈີນໃນບັນຫາມຽນມາ ໃນວັນທີ 14/12/2023 ເຮັດໃຫ້ກອງກຳລັງໂກກັງ, ຕາອາງ ແລະ ຍະໄຂ່ ທີ່ມີຖານທີ່ໝັ້ນຢູ່ພາກເໜືອຂອງມຽນມາ ສາມາດບັນລຸຂໍ້ຕົກລົງຢຸດຍິງຊົ່ວຄາວກັບກອງທັບມຽນມາ, ແຕ່ຍັງມີການປະທະກັນຂອງກອງກຳລັງຊົນເຜົ່າສ່ວນນ້ອຍ ແລະ ກອງທັບມຽນມາຢູ່ຫຼາຍເຂດ. ສ່ວນ ກຸ່ມພັນທະມິດສາມອ້າຍນ້ອງ ທີ່ປະກອບດ້ວຍກອງທັບອາລະກັນ, ກອງກຳລັງພັນທະມິດປະຊາທິປະໄຕມຽນມາ ແລະ ກອງກຳລັງປົດປ່ອຍຊາດຕະອ່ຽງ ອ້າງວ່າສາມາດຍຶດເຂດເສັ້ນທາງການຄ້າສຳຄັນໃກ້ຊາຍແດນຈີນ ຢູ່ ລັດຊານ.

ຂະນະທີ່ນາຍົກໄທ ໄດ້ໃຫ້ສຳພາດ (ຕໍ່ໜັງສືພິມ/ສຳນັກຂ່າວນິເກອິ) ວ່າ ຍຶດໝັ້ນຕາມການຕົກລົງ 5 ຂໍ້ ຂອງອາຊຽນ, ແຕ່ໄທໃນຖານະບ້ານໃກ້ເຮືອນຄຽງທີ່ມີຊາຍແດນຮ່ວມກັບມຽນມາ 2000 ກວ່າກິໂລແມັດ ເຫັນວ່າ ໄທຄວນຈະມີບົດບາດໃນການເຈລະຈາກັບລັດຖະບານທະຫານມຽນມາ. ນອກນີ້, ໄທ ຍັງໄດ້ປະສານງານກັບລັດທະບານທະຫານມຽນມາ ເພື່ອກະກຽມການຊ່ວຍເຫຼືອດ້ານມະນຸດສະທຳສຳລັບຜູ້ໄດ້ຮັບຜົນກະທົບ ແລະ ຜູ້ອົບພະຍົບ ຖ້າຫາກສະຖານະການຮ້າຍແຮງຫຼາຍຂຶ້ນ.

2) **ຂໍ້ຂັດແຍ່ງປາແລັດສະຕິນ-ອິດສະຣາແອນ**

ຂໍ້ຂັດແຍ່ງປາແລັດສະຕິນ-ອິດສະຣາແອນ ເພີ່ມທະວີຄວາມເຄັ່ງຕຶງຢ່າງຕໍ່ເນື່ອງ ໂດຍສະເພາະພາຍຫຼັງສິ້ນສຸດການຢຸດຍິງຊົ່ວຄາວ ແລະ ການແລກປ່ຽນຕົວປະກັນ ແຕ່ວັນທີ 24-30/11/2023, ສອງຝ່າຍສືບຕໍ່ໂຈມຕີເຊິ່ງກັນ ແລະ ກັນ. ຂະນະທີ່, ອິດສະຣາແອນ ສຸມໃສ່ການໂຈມຕີທາງບົກ ແລະ ທາງອາກາດ ເພື່ອຍຶດເອົາພາກໃຕ້ຂອງເຂດ Gaza ພາຍຫຼັງສາມາດຍຶດພາກເໜືອຂອງເຂດດັ່ງກ່າວໄດ້ກ່ອນໜ້ານີ້. ພ້ອມດຽວກັນ, ໄດ້ປ່ອຍນ້ຳທະເລເຂົ້າໃສ່ອຸໂມງໃຕ້ດິນຂອງກຸ່ມ Hamas ບີບໃຫ້ພວກເຂົາອອກຈາກອຸໂມງ. ທ່ານ Benjamin Netanyahu, ນາຍົກລັດຖະມົນຕີອິດສະຣາແອນ ປະກາດວ່າ ຈະບໍ່ຕົກລົງຢຸດຍິງຊົ່ວຄາວ ແລະ ປ່ອຍຕົວປະກັນ ກັບກຸ່ມ Hamas ອີກຕໍ່ໄປ. ຮອດປັດຈຸບັນມີຜູ້ເສຍຊີວິດຫຼາຍກວ່າ 21.000 ຄົນ ແລະ ບາດເຈັບ 54.000 ກວ່າຄົນ.

ວັນທີ 09/12/2023, ທີ່ ກອງປະຊຸມສະພາຄວາມໝັ້ນຄົງຂອງ ສປຊ (UNSC), ສະຫະລັດອາຣັບເອມີເຣດ ໄດ້ສະເໜີມະຕິຮຽກຮ້ອງໃຫ້ຢຸດຍິງໃນເຂດ Gaza ໂດຍໄດ້ຮັບການເຫັນດີຈາກ 13 ປະເທດສະມາຊິກຂອງ UNSC ແລະ ຫຼາຍກວ່າ 90 ປະເທດສະມາຊິກ ສປຊ, ແຕ່ມະຕິດັ່ງກ່າວລົ້ມເຫຼວ ເນື່ອງຈາກອາເມລິກາໃຊ້ສິດສະມາຊິກຖາວອນຂອງ UNSC ຍັບຍັ້ງ, ຊຶ່ງເຮັດໃຫ້ຫຼາຍປະເທດໄດ້ກ່າວປະນາມຕໍ່ການກະທຳດັ່ງກ່າວຂອງອາເມລິກາເປັນຕົ້ນ: ຈີນ, ລັດເຊຍ ແລະ ບັນດາປະເທດອາຣັບ. ວັນທີ 12/12/2023, ສປຊ ໄດ້ລົງມະຕິຄັ້ງໃໝ່ເພື່ອຮຽກຮ້ອງໃຫ້ຢຸດຍິງໃນເຂດ Gaza ແລະ ປ່ອຍຕົວປະກັນທັງໝົດ, ຊຶ່ງໄດ້ຮັບການເຫັນດີຈາກ 153 ປະເທດສະມາຊິກ ສປຊ, ຂັດຄ້ານ 10 ປະເທດ ແລະ ງົດອອກສຽງ 23 ປະເທດ.

ສະພາບການປະທ້ວງຂອງປະຊາຊົນຢູ່ຫຼາຍປະເທດ ຍັງເກີດຂຶ້ນຢູ່ເປັນໄລຍະເພື່ອຮຽກຮ້ອງໃຫ້ຢຸດຍິງໃນເຂດ Gaza ເຊັ່ນ: ເຢຍລະມັນ, ຝຣັ່ງ, ອັງກິດ, ແບນຊິກ, ໂອຕຼິດ, ການາດາ ແລະ ອາເມລິກາ. ວັນທີ 15/12/2023, ນອກແວເປັນເຈົ້າພາບຈັດກອງປະຊຸມລັດຖະມົນຕີຕ່າງປະເທດ ໂດຍມີບັນດາປະເທດອິດສະລາມ ແລະ ເອີຣົບເໜືອ ເຂົ້າຮ່ວມເພື່ອປຶກສາຫາລືກັນແກ້ໄຂຂໍ້ຂັດແຍ່ງປາແລັດສະຕິນ-ອິດສະຣາແອນ. ໃນໂອກາດດັ່ງກ່າວ, ນອກແວ ໄດ້ປະກາດຊ່ວຍເຫຼືອປາແລັດສະຕິນ 76,5 ລ້ານໂດລາ ແລະ ຈະສືບຕໍ່ໃຫ້ການຊ່ວຍເຫຼືອພາຍຫຼັງຂໍ້ຂັດແຍ່ງສິ້ນສຸດລົງ.

3) **ສະພາບແຫຼມເກົາຫຼີ**

ວັນທີ 01/12/2023, ເນື່ອງໃນໂອກາດວັນສ້າງຕັ້ງກອງທັບ ອາກາດ ຄົບຮອບ 77 ປີ, ສະຫາຍ ກິມ ເຈີງອຸນ, ຜູ້ນຳສູງສຸດຂອງ ສປປ ເກົາຫຼີ ໄດ້ຢ້ຽມຢາມກອງທັບອາກາດແຫ່ງ ສປປ ເກົາຫຼີ, ໄດ້ຮຽກຮ້ອງໃຫ້ກອງທັບອາກາດສືບຕໍ່ພັດທະນາລະບົບໂຈມຕີທາງອາກາດຢ່າງທັນສະໄໝ ເພື່ອກຽມພ້ອມຮັບມືກັບໄພຂົ່ມຂູ່ຈາກພາຍນອກ. ພ້ອມດຽວກັນ,

ສປປ ເກົາຫຼີ ໄດ້ປະນາມຕໍ່ຖະແຫຼງການຂອງ ສປຊ ທີ່ໂຈມຕີ ສປປ ເກົາຫຼີ ໃນການສົ່ງດາວທຽມສອດແນມທາງການທະຫານວ່າ ຖະແຫຼງການດັ່ງກ່າວເປັນການລະເມີດອຳນາດອະທິປະໄຕຂອງ ສປປ ເກົາຫຼີ ແລະ ສປປ ເກົາຫຼີ ຈະບໍ່ກັບຄືນສູ່ການເຈລະຈາສັນຕິພາບກັບ ສ.ເກົາຫຼີ, ພ້ອມທັງເນັ້ນຍ້ຳວ່າ ສປປ ເກົາຫຼີ ຈະສືບຕໍ່ພັດທະນາໂຄງການສ້າງດາວທຽມທີ່ທັນສະໄໝຢ່າງຕໍ່ເນື່ອງ. ວັນທີ 17/12/2023, ສປປ ເກົາຫຼີ ໄດ້ຍິງລູກສອນໄຟ ICBM Hwasong-18 ຈຳນວນ 01 ລູກຍິງຈາກ ນະຄອນຫຼວງພຽງຢາງ ແລະ ຕົກລົງໃນທະເລເຫຼືອງ.

ໃນວັນດຽວກັນ, ສ.ເກົາຫຼີ ໄດ້ສົ່ງດາວທຽມສອດແນມທາງທະຫານດວງທຳອິດ ທີ່ມີຊື່ວ່າ ຟັຄອນ-9 ອອກຈາກຖານປ່ອຍດາວທຽມໃນກອງທັບອາກາດແວນເດນບຣັກ, ລັດຄາລິຟໍເນຍຂອງອາເມລິກາ, ເຊິ່ງດາວທຽມດັ່ງກ່າວ ສາມາດບິນຂຶ້ນສູ່ວົງໂຄຈອນອາວະກາດໄດ້ຢ່າງສຳເລັດ. ພ້ອມນີ້, ສ. ເກົາຫຼີ ປະກາດວ່າຈະສົ່ງດາວທຽມເພີ່ມອີກ 04 ດວງ ພາຍໃນປີ 2026. ວັນທີ 04/12/2023, ສ. ເກົາຫຼີ ໄດ້ທົດລອງລູກສອນໄຟທີ່ ຢູ່ ທະເລເຊຈູ, ພາກໃຕ້ຂອງ ສ. ເກົາຫຼີ.

## 2. <u>ສະພາບການ ໃນຂົງເຂດເອີຣົບ ແລະ ອາເມລິກາ</u>

### 1) ສະພາບປັ່ນປ່ວນອ້ອມຂໍ້ຂັດແຍ່ງອູແກຣນ-ລັດເຊຍ

ການໂຈມຕີກັນລະຫວ່າງ ອູແກຣນ ແລະ ລັດເຊຍ ຍັງສືບຕໍ່ທະວີຄວາມຮຸນແຮງ ຢູ່ຫຼາຍພາກພື້ນຂອງອູແກຣນໂດຍສະເພາະຢູ່ພາກພື້ນ Kherson ແລະ Bakhmut, ສ່ວນພັນທະມິດຂອງອູແກຣນ ຍັງສືບຕໍ່ໃຫ້ການສະໜັບສະໜູນ. ໃນໄລຍະຜ່ານມາ ອາເມລິກາ ໄດ້ຈັດສັນງົບປະມານຊ່ວຍເຫຼືອອູແກຣນແລ້ວຫຼາຍກວ່າ 100 ຕື້ໂດລາ (ດ້ານການທະຫານ 60,3 ຕື້, ດ້ານເສດຖະກິດ 20,7 ຕື້ ແລະ ດ້ານມະນຸດສະທຳ 10 ຕື້ໂດລາ). ວັນທີ 13/12/2023, ທ່ານ Volodymyr Zelensky, ປະທານາທິບໍດີອູແກຣນ ໄດ້ຢ້ຽມຢາມອາເມລິກາ ແລະ ພົບປະກັບ ປະທານາທິບໍດີ Joe Biden, ຊຶ່ງ ທ່ານ Biden ປະກາດຈະໃຫ້ການຊ່ວຍເຫຼືອສຸກເສີນແກ່ອູແກຣນ ຕື່ມອີກ 200 ລ້ານໂດລາ ໂດຍບໍ່ຈຳເປັນຕ້ອງຜ່ານການອະນຸມັດຈາກສະພາ, ກ່ອນໜ້ານີ້ລັດຖະບານອາເມລິກາ ບໍ່ປະສົບຜົນສຳເລັດໃນການຜ່ານສະພາສູງຕໍ່ກັບການສະເໜີງົບປະມານຊ່ວຍເຫຼືອອູແກຣນ ທີ່ມີມູນຄ່າຫຼາຍກວ່າ 60 ຕື້ໂດລາ. ປີ 2024 ອາເມລິກາ ຈະສົ່ງມອບເຮືອບິນຮົບ F-16 ໃຫ້ແກ່ອູແກຣນ. ສຳລັບ ອີຢູ ແມ່ນກຳລັງປຶກສາຫາລືຕໍ່ກັບການຈັດສັນງົບປະມານຊ່ວຍເຫຼືອອູແກຣນ ເພີ່ມຕື່ມ 50 ຕື້ເອີໂຣ (54 ຕື້ໂດລາ) ພ້ອມທັງການສະເໜີເຂົ້າເປັນສະມາຊິກອີຢູແບບເລັ່ງດ່ວນຂອງອູແກຣນ ແຕ່ແຜນດັ່ງກ່າວຖືກຄັດຄ້ານຈາກ ຮົງກາລີ, ສະໂລວາກີ ແລະ ໂອຕຼິດ. ພ້ອມດຽວກັນ, ໄດ້ຕົກລົງເຫັນດີດຳເນີນຂັ້ນຕອນເຈລະຈາເຂົ້າເປັນສະມາຊິກອີຢູຂອງອູແກຣນ ແລະ ມົນໂດວາ ພ້ອມທັງໃຫ້ສະຖານະປະເທດຜູ້ສະໝັກແກ່ ຊໍອກຊີ. ສ່ວນ ນາໂຕ້ປະກາດເພີ່ມງົບປະມານຄັ້ງໃຫຍ່ ສຳລັບປີ 2024 ໃນນັ້ນ 2,2 ຕື້ໂດລາ ສຳລັບການທະຫານ (ເພີ່ມຂຶ້ນ 12% ທຽບໃສ່ປີ 2023); ດ້ານຄວາມໝັ້ນຄົງ 1,4 ຕື້ໂດລາ (ເພີ່ມຂຶ້ນ 30%) ແລະ ດ້ານພົນລະເຮືອນ 477 ລ້ານໂດລາ (ເພີ່ມຂຶ້ນ 18%).

ອູແກຣນ ສືບຕໍ່ລະດົມກຳລັງຊາວໜຸ່ມ, ແມ່ຍິງ ແລະ ຜູ້ສູງອາຍຸ ເພື່ອເຂົ້າຕໍ່ສູ້ຕ້ານກັບລັດເຊຍ. ສ່ວນ ນາໂຕ້ ໄດ້ສົ່ງກຳລັງທະຫານເຂົ້າປະຈຳການຢູ່ເຂດຊາຍແດນແຟງລັງທີ່ຕິດກັບລັດເຊຍ ເຮັດໃຫ້ສະພາບການຢູ່ເຂດຊາຍແດນແຟງລັງ-ລັດເຊຍ ຍິ່ງທະວີຄວາມເຄັ່ງຕຶງຂຶ້ນຕື່ມ. ແຟງລັງ ລົງນາມໃນຂໍ້ຕົກລົງການຮ່ວມມືດ້ານຄວາມໝັ້ນຄົງ (DCA) ກັບອາເມລິກາ ທີ່ອະນຸຍາດໃຫ້ອາເມລິກາສາມາດສົ່ງທະຫານເຂົ້າປະຈຳການຢູ່ຖານທັບຂອງແຟງລັງ 15 ແຫ່ງໃນທົ່ວປະເທດ. ຂະນະທີ່ ລັດເຊຍ ກຽມສ້າງເຂດທະຫານໃໝ່ຢູ່ Leningrad ເພື່ອຮັບມືກັບສະພາບການດັ່ງກ່າວ (ລັດເຊຍ ແລະ ແຟງລັງ ມີຊາຍແດນຮ່ວມກັນປະມານ 1.300 ກິໂລແມັດ). ລັດເຊຍ ໄດ້ປະກາດເພີ່ມກຳລັງທະຫານ 170.000 ຄົນ ເຂົ້າປະຈຳການ ເຮັດໃຫ້ປັດຈຸບັນລັດເຊຍມີທະຫານທັງໝົດ 1.320.000 ຄົນ ທີ່ປະຈຳການ ແລະ ກຽມພ້ອມຕໍ່ສູ້. ທ່ານ Sergey Shoigu, ລັດຖະມົນຕີປ້ອງກັນປະເທດລັດເຊຍ ລາຍງານວ່າ ນັບແຕ່ເກີດຂໍ້ຂັດແຍ່ງອູແກຣນ-ລັດເຊຍ, ອູແກຣນສູນເສຍທະຫານຫຼາຍກວ່າ 383.000 ຄົນ.

**ແຫຼ່ງຂ່າວອ້າງອີງ** :VNA, Vietnam News, Vietnam- Express, VNS, Xinhua, CNA, Global Times, The Japantimes, kpl, Yonhap, CRI, Jakata post, RT, BBC, CNN, AFP, NHK, Aljazeera, CGTN, Reuters, Nournews, TNN, Thai TBS, Top news, ກະຊວງການຕ່າງປະເທດລາວ, ກົມ ອປອ ຄຕພ, ກົມ ອອ ຄຕພ ແລະ ບັນດາສະຖານທູດແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ.

# III. ການເຄື່ອນໄຫວວຽກງານ ຂອງຄະນະນຳ ຄຕພ

1. **ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ພົບປະທາງໄກ ກັບ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດກູບາ.**




ວັນທີ 11 ທັນວາ 2023, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ປປ ລາວ ໄດ້ພົບປະຜ່ານລະບົບວີດີໂອທາງໄກ ກັບ ສະຫາຍ ອິລີມີໂອ ລັດມີຣ ໂລສາດາ ກາຣເຊຍ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກກອມມູນິດກູບາ.

ໃນໂອກາດດັ່ງກ່າວ, ສະຫາຍ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມປິຕິຍິນດີເປັນຢ່າງຍິ່ງ ທີ່ໄດ້ມີໂອກາດພົບປະຜ່ານວີດີໂອທາງໄກ ກັບ ສະຫາຍ ອິລີມີໂອ ລັດມີຣ ໂລສາດາ ກາຣເຊຍ ອີກຄັ້ງ. ຝ່າຍລາວໄດ້ແຈ້ງສະພາບການທີ່ພົ້ນເດັ່ນຢູ່ ສປປ ລາວ ໃນໄລຍະຜ່ານມາ, ໂດຍສະເພາະການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ປປ ລາວ; ຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນສຳເລັດອັນໃຫຍ່ຫຼວງທີ່ປະຊາຊົນກູບາອ້າຍນ້ອງ ພາຍໃຕ້ການນຳພາອັນເດັດດ່ຽວໜຽວແໜ້ນຂອງພັກກອມມູນິດກູບາ ຍາດມາໄດ້ຕະຫຼອດໄລຍະ 60 ກວ່າປີຜ່ານມາ, ໂດຍສະເພາະແມ່ນຜົນສຳເລັດ ທີ່ມີຄວາມໝາຍຄວາມສຳຄັນໃນການພັດທະນາເສດຖະກິດ-ສັງຄົມ ແລະ ປົກປັກຮັກສາໝາກຜົນຂອງການປະຕິວັດ ໃນທ່າມກາງການຖືກປິດລ້ອມທາງດ້ານເສດຖະກິດ, ການຄ້າ ແລະ ການເງິນ ເປັນເວລາຫົກທົດສະວັດ. ຕີລາຄາສູງຕໍ່ຄວາມສາມັກຄີ, ສາຍພົວພັນມິດຕະພາບ ແລະ ການຮ່ວມມື ທີ່ເປັນມູນເຊື້ອອັນດີງາມມາແຕ່ດົນນານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ກູບາ ກໍ່ຄື ສອງຄະນະພົວພັນຕ່າງປະເທດສູນກາງພັກ, ຊຶ່ງໄດ້ຮັບການເສີມຂະຫຍາຍໃຫ້ນັບມື້ນັບແໜ້ນແຟ້ນຍິ່ງໆຂຶ້ນ, ປະກອບສ່ວນ ສຳຄັນເຂົ້າໃນພາລະກິດປະຕິວັດ ຢູ່ສອງປະເທດລາວ ແລະ ກູບາ ກໍຄືພາລະກິດ ສັນຕິພາບ, ມິດຕະພາບ ແລະ ການຮ່ວມມື ເພື່ອການພັດທະນາໃນພາກພື້ນ ແລະ ສາກົນ.

ສະຫາຍ ອິລີມີໂອ ລັດມີຣ ໂລສາດາ ກາຣເຊຍ ໄດ້ແຈ້ງໃຫ້ຊາບສະພາບ ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ VIII ຂອງພັກກອມມູນິດກູບາ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ບັນດາຜົນສຳເລັດຂອງ ສປປ ລາວ ທີ່ຍາດມາໄດ້ ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ພາຍໃຕ້ການນຳພາອັນຖືກຕ້ອງ ແລະ ສະຫຼາດສ່ອງໃສ ຂອງພັກ ປປ ລາວ, ອັນໄດ້ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນລາວ ໄດ້ຮັບການປັບປຸງໃຫ້ດີຂຶ້ນເທື່ອລະກ້າວ; ບົດບາດ ແລະ ອິດທິພົນ ຂອງ ພັກ ແລະ ລັດຖະບານ ສປປ ລາວ ນັບມື້ສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ. ສະແດງຄວາມຂອບໃຈມາຍັງພັກ, ລັດຖະບານ ແລະ ປະຊາຊົນລາວອ້າຍນ້ອງ ທີ່ໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນການປະຕິວັດກູບາ ຕະຫຼອດໄລຍະຜ່ານມາ.

**2. ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ຕ້ອນຮັບການເຂົ້າຢ້ຽມອຳລາ ຂອງເອກອັກຄະລັດຖະທູດ ອິດສະຕຣາລີ ປະຈຳ ສປປ ລາວ.**



ວັນທີ 13 ທັນວາ 2023, ທີ່ສຳນັກງານຄະນະພົວພັນຕ່າງປະເທດສູນກາງພັກ, ທ່ານ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຕ້ອນຮັບການເຂົ້າຢ້ຽມອຳລາຂອງ ທ່ານ ໂພຣ ແຄລີ, ເອກອັກຄະລັດຖະທູດ ວິສາມັນຜູ້ມີອຳນາດເຕັມ ແຫ່ງ ອົດສະຕຣາລີ ປະຈຳ ສປປ ລາວ ໃນໂອກາດສຳເລັດການປະຕິບັດໜ້າທີ່ການທູດ ຢູ່ ສປປ ລາວ.

ໃນໂອກາດດັ່ງກ່າວ, ທ່ານ ທອງສະຫວັນ ພົມວິຫານ ໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງ ຕໍ່ຜົນສຳເລັດໃນການປະຕິບັດໜ້າທີ່ການທູດຢູ່ ສປປ ລາວ ຂອງ ທ່ານ ເອກອັກຄະລັດຖະທູດ, ເຊິ່ງເປັນການປະກອບສ່ວນອັນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນ ແລະ ການຮ່ວມມື ລະຫວ່າງ ລາວ-ອົດສະຕຣາລີ, ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງຊາດ ແລະ ຕີລາຄາສູງ ຕໍ່ສາຍພົວພັນການຮ່ວມມື ລາວ-ອົດສະຕຣາລີ ໃນຕະຫຼອດໄລຍະຜ່ານມາ, ໂດຍສະເພາະໃນໄລຍະທ່ານ ເອກອັກຄະລັດຖະທູດປະຕິບັດໜ້າທີ່ ຢູ່ ສປປ ລາວ, ອັນໄດ້ເຮັດໃຫ້ການພົວພັນສອງຝ່າຍໄດ້ຮັບການຂະຫຍາຍຕົວຢ່າງຕໍ່ເນື່ອງ, ໂດຍສະເພາະ ການພົວພັນການທູດສອງຝ່າຍ ກໍ່ຢູ່ໃນໄລຍະກະກຽມຍົກລະດັບເປັນຄູ່ຮ່ວມມືແບບກວມລວມ ໃນປີ 2024 ແລະ ໃນການພົວພັນການທູດປະຊາຊົນສອງຝ່າຍກໍ່ໄດ້ຕົກລົງສ້າງຕັ້ງສະມາຄົມມິດຕະພາບ ລາວ-ອົດສະຕຣາລີ ແລະ ອົດສະຕຣາລີ-ລາວ ແລ້ວ ປັດຈຸບັນທັງສອງຝ່າຍກຳລັງແຕ່ງຕັ້ງຄະນະບໍລິຫານງານສະມາຄົມຕາມຂັ້ນຕອນພາຍໃນຂອງແຕ່ລະຝ່າຍ. ພ້ອມນັ້ນ, ທັງສອງຝ່າຍກໍ່ຍັງສືບຕໍ່ໃຫ້ການສະໜັບສະໜູນຊ່ວຍເຫຼືອເຊິ່ງກັນ ແລະ ກັນ ທັງໃນຂອບສອງຝ່າຍ, ຫຼາຍຝ່າຍ ໃນພາກພື້ນ ແລະ ສາກົນ.

ທ່ານ ໂພຣ ແຄລີ ໄດ້ສະແດງຄວາມຂອບໃຈຢ່າງຈິງໃຈ ມາຍັງ ທ່ານ ທອງສະຫວັນ ພົມວິຫານ ທີ່ໄດ້ໃຫ້ການຕ້ອນຮັບອັນອົບອຸ່ນ ໃນໂອກາດເຂົ້າຢ້ຽມອຳລາໃນຄັ້ງນີ້ ແລະ ສະແດງຄວາມຂອບໃຈຕໍ່ ລັດຖະບານ ສປປ ລາວ ກໍຄືຄະນະພົວພັນຕ່າງປະເທດສູນກາງພັກ ທີ່ໄດ້ໃຫ້ການຮ່ວມມືສະໜັບສະໜູນ ຊ່ວຍເຫຼືອ ແລະ ອຳນວຍຄວາມສະດວກ ໃນການປະຕິບັດໜ້າທີ່ການທູດຂອງຕົນ ຢູ່ ສປປ ລາວ ໃນໄລຍະຜ່ານມາ, ອວຍພອນ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ພ້ອມດ້ວຍຄະນະນຳ ແລະ ພະນັກງານຄະນະພົວພັນຕ່າງປະເທດສູນກາງພັກ ຈົ່ງມີສຸຂະພາບເຂັ້ມແຂງ, ມີພາລະນາໄມສົມບູນ ແລະ ປະສົບຜົນສຳເລັດໃນໜ້າທີ່ອັນມີກຽດທຸກປະການ. ພ້ອມທັງໄດ້ຢືນຢັນວ່າ, ພາຍຫຼັງກັບຄືນມາປະເທດຍັງຈະສືບຕໍ່ປະກອບສ່ວນເຫື່ອແຮງເຂົ້າໃນການເພີ່ມພູນຄູນສ້າງ ແລະ ເສີມຂະຫຍາຍສາຍພົວພັນ ລາວ-ອົດສະຕຣາລີ ໃຫ້ສືບຕໍ່ໄດ້ຮັບຂະຫຍາຍຕົວໃນຕໍ່ໜ້າ.

### 3. ກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານຕ່າງປະເທດ ປະຈຳປີ 2023, ທິດທາງແຜນການ ປີ 2024 ແລະ ພິທີຍ້ອງຍໍຜົນງານຂອງຄະນະພົວພັນຕ່າງປະເທດສູນກາງພັກ



ວັນທີ 12 ທັນວາ 2023 ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານຂອງຕົນໃນໄລຍະ 1 ປີ ຜ່ານມາ ແລະ ການຍ້ອງຍໍປະຈຳປີຂອງຕົນ, ໂດຍການເປັນປະທານຂອງ ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກ, ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ, ສະຫາຍ ຕິ່ງ ສຸກສັນ, ຮອງເລຂາຄະນະພັກ, ຮອງລັດຖະມົນຕີກະຊວງການຕ່າງປະເທດ ແລະ ມີຄະນະພັກ-ຄະນະນຳ, ຄະນະກົມຈາກຄະນະພົວພັນຕ່າງປະເທດສູນກາງພັກ ແລະ ກະຊວງການຕ່າງປະເທດ, ພະນັກງານອາວຸໂສບຳນານ, ຜູ້ໃຫ້ການສະໜັບສະໜູນໃນການຈັດງານສະເຫຼີມສະຫຼອງ ຄຕພ ຄົບຮອບ 40 ປີ ຕະຫຼອດເຖິງ ພະນັກງານສະມາຊິກພັກທົ່ວຄະນະ ພົວພັນຕ່າງປະເທດສູນກາງພັກ ແລະ ແຂກຖືກເຊີນ ເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການສະຫຼຸບຕີລາຄາ ກ່ຽວກັບ ການປະຕິບັດວຽກງານຂອງ ຄະນະພົວພັນຕ່າງປະເທດສູນກາງພັກ ໃນໄລຍະ 1 ປີ ຜ່ານມາ, ໂດຍໄດ້ຍົກໃຫ້ເຫັນຜົນງານທີ່ຍາດມາໄດ້, ບາງດ້ານທີ່ຄົງຄ້າງ, ບົດຮຽນທີ່ຖອດຖອນໄດ້, ທິດທາງແຜນການສຳລັບປີ 2024; ປະກາດເລື່ອນຕຳແໜ່ງບໍລິຫານຂັ້ນພະແນກ, ພ້ອມທັງຍ້ອງຍໍພະນັກງານພາຍໃນຄະນະພົວພັນຕ່າງປະເທດສູນກາງພັກ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດໜ້າທີ່ຕະຫຼອດປີ 2023 ແລະ ບັນດາຜູ້ສະໜັບສະໜູນໃນການຈັດພິທີສະເຫຼີມສະຫຼອງວັນສ້າງຕັ້ງຄະນະພົວພັນຕ່າງປະເທດສູນກາງພັກ ຄົບຮອບ 40 ປີ ເຊິ່ງໄດ້ຈັດຂຶ້ນໃນເດືອນສິງຫາ ທີ່ຜ່ານມາ.

ໃນກອງປະຊຸມດັ່ງກ່າວ, ສະຫາຍ ທອງສະຫວັນ ພົມວິຫານ, ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກຫົວໜ້າຄະນະພົວພັນຕ່າງປະເທດສູນກາງ ໄດ້ໃຫ້ກຽດໂອ້ລົມ ໂດຍໄດ້ສະແດງຄວາມຊົມເຊີຍຕໍ່ ບັນດາຜົນສຳເລັດ ແລະ ຜົນງານທີ່ພະນັກງານຄະນະພົວພັນຕ່າງປະເທດສູນກາງພັກ ຍາດມາໄດ້ໃນຕະຫຼອດ ໄລຍະ 1 ປີ ຜ່ານມາ, ໂດຍສະເພາະແມ່ນ ການເຮັດສຳເລັດພາລະບົດບາດ ເປັນເສນາທິການໃຫ້ແກ່ສູນກາງພັກ ໃນການເຄື່ອນໄຫວຕ່າງປະເທດດ້ານພັກ ແລະ ການທູດປະຊາຊົນ ອັນໄດ້ເຮັດໃຫ້ບົດບາດອິດທິພົນຂອງ ພັກ-ລັດ ເຮົາໄດ້ຮັບການຍົກສູງໃນເວທີພາກພື້ນ ແລະ ສາກົນ; ການຈັດຕັ້ງປະຕິບັດວຽກງານໃນປີ 2023 ເຖິງຈະຢູ່ທ່າມກາງສະພາບການພາກພື້ນ ແລະ ສາກົນມີຄວາມຫຍຸ້ງຍາກສັບສົນ ບວກກັບຄວາມຫຍຸ້ງຍາກຕ່າງໆພາຍໃນປະເທດເຮົາ ແຕ່ກໍ່ໄດ້ຫາວິທີການເໝາະສົມໃນການເສີມຂະຫຍາຍການພົວພັນລະຫວ່າງພັກເຮົາກັບຕ່າງປະເທດ ໂດຍຍຶດໝັ້ນແນວທາງການຕ່າງປະເທດຂອງພັກ, ເປັນເຈົ້າການຕິດຕາມ, ກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດບັນດາຂໍ້ຕົກລົງຮ່ວມມືກັບພັກເພື່ອນມິດຍຸດທະສາດ ໃຫ້ປະສິດທິຜົນ. ພິເສດ ໃນປີ 2023 ຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ສຳເລັດການຈັດກອງປະຊຸມກາງສະໄໝສະມາຊິກພັກ ຄັ້ງທີ II ຂອງ ອົງຄະນະພັກ ຂອງຕົນຢ່າງຈົບງາມ; ພ້ອມທັງໄດ້ມີຄຳເຫັນ ຊີ້ນຳໃຫ້ພະນັກງານສະມາຊິກພັກ ຄຕພ ທຸກຖ້ວນໜ້າສຸມໃສ່ການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມໃຫຍ່ ຄັ້ງທີ II ຂອງ

ອີງຄະນະພັກ ຄຕພ ແລະ ແຜນພັດທະນາ ຄຕພ ແຕ່ປີ 2021-2025 ໃຫ້ແຕກດອກອອກຜົນຍິ່ງໆຂຶ້ນ, ເອົາໃຈໃສ່ພັດທະນາຕົນເອງທາງດ້ານການເມືອງ-ແນວຄິດ, ວິຊາສະເພາະ ແລະ ພາສາຕ່າງປະເທດ, ສືບຕໍ່ກໍ່ສ້າງ ແລະ ຮັກສານາມມະຍົດໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນຕິດພັນກັບຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ.

ໃນຕອນທ້າຍ, ສະຫາຍ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ໄດ້ສະແດງຄວາມເຊື່ອໝັ້ນວ່າດ້ວຍຈິດໃຈມານະບຸກ ບືນ, ຄວາມສາມັກຄີເປັນເອກະພາບພາຍໃນ ຈະເຮັດໃຫ້ການປະຕິບັດໜ້າທີ່ ຂອງ ຄະນະພົວພັນຕ່າງປະເທດສູນກາງພັກ ສືບຕໍ່ຍາດໄດ້ຜົນສຳເລັດໃຫຍ່ກວ່າເກົ່າ ໃນການເຄື່ອນໄຫວວຽກງານຕ່າງປະເທດຂອງພັກເພື່ອສືບຕໍ່ສ້າງສະພາບແວດລ້ອມທີ່ອຳນວຍຄວາມສະດວກໃຫ້ແກ່ການປົກປັກຮັກສາ ແລະ ສ້າງສາປະເທດຊາດໃນຕໍ່ໜ້າ.

**4. ສະມາຄົມມິດຕະພາບ ລາວ-ອາແຊັກໄບຊານ ຈັດງານພົບປະອະດີດນັກສຶກສາລາວ ຈາກ ປະເທດ ອາແຊັກໄບຊານ.**



ໃນວັນທີ 02 ທັນວາ 2023, ສະມາຄົມມິດຕະພາບ ລາວ-ອາແຊັກໄບຊານ ໄດ້ຈັດງານພົບປະອະດີດນັກສຶກສາລາວ ທີ່ຮຽນຈົບຈາກປະເທດ ອາແຊັກໄບຊານ ໃຫ້ກຽດເຂົ້າຮ່ວມງານດັ່ງກ່າວມີ ທ່ານ ທອງພັດ ອິນທະວົງ, ຮອງລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່, ປະທານສະມາຄົມມິດຕະພາບ ລາວ-ອາແຊັກໄບຊານ, ທ່ານ ໂຊກີ ເມດດີຊາດາ, ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ອາແຊັກໄບຊານ ປະຈຳ ສປປ ລາວ, ທ່ານ ວາລະໄຊ ເລັ່ງສະຫັວດ, ຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ. ນອກນັ້ນຍັງມີ ຄະນະບໍລິຫານງານສະມາຄົມມິດຕະພາບ ລາວ-ອາແຊັກໄບຊານ ແລະ ບັນດາອະດີດນັກສຶກສາລາວ ຈາກ ປະເທດ ອາແຊັກໄບຊານ ເຂົ້າຮ່ວມທັງໝົດ 80 ກວ່າທ່ານ.

ງານພົບປະຄັ້ງນີ້ ກໍ່ເພື່ອເປັນການຮັດແໜ້ນສາຍພົວພັນມິດຕະພາບ ແລະ ເຕົ້າໂຮມຄວາມສາມັກຄີ ລະຫວ່າງສະມາຄົມມິດຕະພາບ ລາວ-ອາແຊັກໄບຊານ, ສະຖານທູດອາແຊັກໄບຊານ ປະຈຳ ລາວ ແລະ ອະດີດນັກສຶກສາລາວ ຈາກປະເທດອາແຊັກໄບຊານ ທັງເປັນການປະກອບສ່ວນພັດທະນາ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບການຮ່ວມມືທີ່ດີ ລະຫວ່າງ ສອງປະເທດ ແລະ ປະຊາຊົນສອງຊາດ ລາວ ແລະ ອາແຊັກໄບຊານ.

ສປປ ລາວ ແລະ ອາແຊັກໄບຊານ ໄດ້ສ້າງຕັ້ງສາຍພົວພັນການທູດຮ່ວມກັນ ໃນວັນທີ 22 ພຶດສະພາ 1995 ເປັນເວລາ 28 ປີ ທີ່ທັງສອງປະເທດໄດ້ຖະນຸຖະໜອມ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບ ທີ່ມີມາແຕ່ຍາວນານໃຫ້ໄດ້ຮັບການພັດທະນາ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ. ສຳລັບສະມາຄົມມິດຕະພາບ ລາວ-ອາແຊັກໄບຊານ ກໍໄດ້ເຄື່ອນໄຫວຕາມພາລະບົດບາດ, ເງື່ອນໄຂ ແລະ ຄວາມສາມາດ ຮ່ວມກັບພາກສ່ວນກ່ຽວຂ້ອງ ຂອງ ອາແຊັກໄບຊານ ໂດຍສະເພາະກໍ່ແມ່ນ ສະຖານທູດອາແຊັກໄບຊານ ປະຈຳ ລາວ ທີ່ມີສຳນັກງານຕັ້ງ ຢູ່ ຮ່າໂນ້ຍ ສສ. ຫວຽດນາມ. ໂດຍຈັດກິດຈະກຳຮ່ວມກັນເນື່ອງໃນໂອກາດວັນສຳຄັນຕ່າງໆ ຂອງ ສອງປະເທດ ເພື່ອເປັນການປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບ ທີ່ ມີມູນເຊື້ອອັນດີງາມ ແລະ ການຮ່ວມມື ລະຫວ່າງ ສອງປະເທດ ແລະ ປະຊາຊົນສອງຊາດ ລາວ-ອາແຊັກໄບຊານ ໃຫ້ໄດ້ຮັບການພັດທະນາ ນຳເອົາຜົນປະໂຫຍດຕົວຈິງມາສູ່ປະຊາຊົນສອງປະເທດ ແລະ ເພື່ອປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນພາລະກິດ ສັນຕິພາບ, ມິດຕະພາບ ແລະ ການຮ່ວມມືໃນພາກພື້ນ ແລະ ໃນໂລກ.

ໃນໂອກາດດັ່ງກ່າວ, ທ່ານ ໂຊກີ ເມດດີຊາດາ ( SHOVGI MEHDIZADA ) ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ອາແຊັກໄບຊານ ປະຈຳ ສປປ ລາວ ໄດ້ມອບຫຼຽນທີ່ລະນຶກສະເຫຼີມສະຫຼອງ ຄົບຮອບ 100 ປີ ຂອງ ວິທະຍາໄລອຸດສາຫະກຳ ແລະ ນ້ຳມັນລັດອາແຊັກໄບຊານ ໃຫ້ແກ່ ທ່ານ ປອ.ນາງ ສູນທອນ ໄຊຍະຈັກ, ຄະນະເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ທ່ານ ສຈ.ປອ ບໍ່ວຽງຄຳ ວົງດາລາ, ກຳມະການສູນກາງພັກ ລັດຖະມົນຕີ ກະຊວງເຕັກໂນໂລຊີ ແລະ ການສື່ສານ, ທ່ານ ສົມດີ ບຸນຄຸ້ມ, ອະດີດຮອງຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ແລະ ທ່ານ ປອ. ນາມ ວິຍະເກດ, ອະດີດລັດຖະມົນຕີ ປະຈຳ ສຳນັກງານນາຍົກລັດຖະມົນຕີ ທີ່ມີຜົນງານດີເດັ່ນປະກອບສ່ວນເຂົ້າໃນການພົວພັນຮ່ວມມື ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບ ລະຫ່ວາງ ສປປ ລາວ ແລະ ອາແຊັກໄບຊານ.